


# ທ່ານ ນາງ ສາຍສະໝອນ ຈັນທະຈັກ

## ຜູ້ອຳນວຍການ ທຄຕລ

## ໄດ້ຮັບໂລ້ລາງວັນ ຜູ້ບໍລິຫານຍິງດີເດັ່ນ - ສາຂາທະນາຄານ ປະຈຳປີ 2025 ຈາກອົງກອນ WOMEN'S TABLOID

**ຂ່າວໂດຍ:** ຂະແໜງ ພົວພັນນັກລົງທຶນ ແລະ ຮ່ວມມືສາກົນ https://www.bcel.com.la/ **Email:** bcelhqv@bcel.com.la

ໃນວັນທີ 22 ມັງກອນ 2026 **ທ່ານ ນ. ສາຍສະໝອນ ຈັນທະຈັກ** ຜູ້ອຳນວຍການ ທຄຕລ ໄດ້ຮັບກຽດເຂົ້າຮ່ວມຮັບລາງວັນ **ຜູ້ບໍລິຫານຍິງດີເດັ່ນ-ສາຂາທະນາຄານ ປະຈຳປີ 2025** ຈາກອົງກອນ **WOMEN'S TABLOID**, ເຊິ່ງງານດັ່ງກ່າວຈັດທີ່ ນະຄອນ DUBAI, ປະເທດ UNITED ARAB EMIRATES

ອົງກອນ **WOMEN'S TABLOID (WT)** ເປັນອົງກອນສາກົນ ຈາກປະເທດ ສະຫະລາຊະອານາຈັກອັງກິດ ໄດ້ ມອບລາງວັນແກ່ພາກສ່ວນທຸລະກິດທີ່ມີຜູ້ບໍລິຫານເປັນເພດຍິງ, ສຳລັບປີ 2025 ໄດ້ມີຫົວໜ່ວຍທຸລະກິດ ທີ່ຜ່ານການຄັດເລືອກ ແລະ ເຂົ້າຮ່ວມຮັບລາງວັນຈຳນວນ **201** ບໍລິສັດ ຈາກ **51** ປະເທດທົ່ວໂລກ. ໃນນັ້ນ **ທ່ານ ນ. ສາຍສະໝອນ ຈັນທະຈັກ** ໄດ້ຮັບກຽດເຂົ້າຮ່ວມຮັບລາງວັນອັນຊົງກຽດ ຜູ້ບໍລິຫານຍິງດີເດັ່ນ - ສາຂາທະນາຄານ ປະຈຳປີ 2025 ເປັນຜູ້ບໍລິຫານຍິງໃນຂົງເຂດທະນາຄານທຸລະກິດໃນ ສປປ ລາວ ທີ່ໄດ້ຮັບລາງວັນດັ່ງກ່າວ.

**ລາງວັນຜູ້ບໍລິຫານຍິງດີເດັ່ນ ສາຂາທະນາຄານ** ທີ່ຜູ້ອຳນວຍການ ທຄຕລ ໄດ້ຮັບຖືເປັນບາດກ້າວສຳຄັນ ໃນການຢັ້ງຢືນຜົນການສຳເລັດການຊີ້ນຳ-ນຳພາ ການບໍລິຫານ ທຄຕລ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ທັງພາຍໃນປະເທດ ພາກພື້ນ ກໍ່ຄືໃນເວທີສາກົນ. ທຄຕລ ໄດ້ຮັບການຍອມຮັບຈາກສາກົນວ່າເປັນທະນາຄານທຸລະກິດທີ່ໂດດເດັ່ນໃນການຂະຫຍາຍຕົວ ແລະ ເປັນຜູ້ນຳດ້ານທະນາຄານດິຈິຕອນທີ່ທັນສະໄໝ ເຊື່ອມໂຍງຕະຫຼາດເງິນ ໃນພາກພື້ນ ແລະ ສາກົນ.